**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຄະນະກຳມະການປົກຄອງ ເມືອງນາຊາຍທອງ
ຫ້ອງການ ໂຍທາທິການ ແລະ ຂົນສົ່ງ ເມືອງ

ເລກທີ 754 /ຍທຂ.ນທ
ວັນທີ 31/8/2026.....

## ໜັງສືເຊີນເຂົ້າຮ່ວມແຂ່ງຂັນການປະມູນ

- ອີງຕາມ ຂໍ້ຕົກລົງ ຄະນະກຳມະການປົກຄອງເມືອງນາຊາຍທອງ ເລກທີ ນ.ຄປມ/096ທລົງ ,ວັນທີ 21 ເມສາ 2023 ວ່າດວ້ຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງຫ້ອງການ ໂຍທາທິການແລະ ຂົນສົ່ງເມືອງ ນາຊາຍທອງ.
- ອີງຕາມ ແຈ້ງໜັງສືແຈ້ງຕອບ ຂອງພະແນກການເງິນ ສະບັບເລກທີ 304/ກງ.ນວ,ລົງວັນທີ 21 ສິງຫາ 2026 ວ່າດ້ວຍງົບປະມານເພື່ອຈັດຕັ້ງປະຕິບັດໂຄງການອະນາໄມຮ່ອງລະບາຍນໍ້າແຄມທາງເພື່ອປ້ອງກັນໄພພິບັກສຸກເສີນ ແລະ ແກ້ໄຂບັນຫານໍ້າຖ້ວມຂັງ ພາຍໃນເມືອງນາຊາຍທອງ ປີ 2026.
- ອີງຕາມ ຂໍ້ຕົກລົງສະບັບເລກທີ /ຈມ.ນທ, ລົງວັນທີ ...../......2026 ວ່າດ້ວຍການແຕ່ງຕັ້ງຄະນະກຳມະການຮັບຜິດຊອບ ຈັດຊື້-ຈັດຈ້າງ ຕິດຕາມ, ກວດກາ ແລະ ຄຸ້ມຄອງໂຄງການກໍ່ສ້າງຕາແສງ ຂອງເມືອງນາຊາຍທອງ ນະຄອນຫຼວງວຽງຈັນ.

ຫ້ອງການ ໂຍທາທິການ ແລະ ຂົນສົ່ງ ເມືອງນາຊາຍທອງ ຂໍເຊີນບັນດາບໍລິສັດທີ່ມີເງື່ອນໄຂ ແລະ ຄວາມ ເໝາະສົມເບື້ອງຕົ້ນ ໃນການເຂົ້າຮ່ວມປະມູນ ໂຄງການກໍ່ສ້າງເສັ້ນທາງ ຊຶ່ງມີລາຍຊື່ດັ່ງນີ້:

1. **ບໍລິສັດ ທີ່ມີເງື່ອນໄຂມີໃບອະນຸຍາດຂະແໜງຂົວທາງ ແລະ ເຄຫາສະຖານ (2025,2026)**
2. **ມີໃບທະບຽນການຄ້າ**
3. **ມີໃບຊຳລະອາກອນ ປີ 2026**

**ສຳລັບບັນດາກິດຈະການທີ່ຈະປະມູນປະກອບດ້ວຍໂຄງການລະອຽດຂ້າງລຸ່ມນີ້:**

| ລ/ດ | ລາຍການໜ້າວຽກລະອຽດ | ທີ່ຕັ້ງ (ໂຄງການ) | ລວງຍາວ (ແມັດ) |
|---|---|---|---|
| 1 | ວຽກລວງຮ່ອງລະບາຍນໍ້າ | | |
| 1.1 | ໂຄງການ ລວງຮ່ອງລະບາຍນໍ້າແຕ່ບ້ານທົ່ວນາ ຫາ ຫ້ວຍນໍ້າຊ່ອງ ເມືອງນາຊາຍທອງ | ບ້ານ ທົ່ວນາ | 4,500 |

**(ລາຍລະອຽດຂອງແຕ່ລະປະເພດໜ້າວຽກຈະລະບຸຢູ່ໃນເອກະສານປະມູນ)**

สแกนด้วย CamScanner

4. ການປະມູນນີ້ແມ່ນອະນຸຍາດໃຫ້ທຸກບໍລິສັດທີ່ມີເງື່ອນໄຂ, ມີໃບອະນຸຍາດດຳເນີນທຸລະກິດ ກໍ່ສ້າງ, ສ້ອມແປງຂົວທາງ, ເຄຫາສະຖານ ຖືກຕ້ອງຕາມກົດໝາຍ.

5. ບໍລິສັດທີ່ມີຄວາມສົນໃຈ ສາມາດຕິດຕໍ່ພົວພັນສອບຖາມຂໍ້ມູນເພີ່ມເຕີມໄດ້ຕາມທີ່ຢູ່ຂ້າງລຸ່ມນີ້ ໃນໂມງລັດຖະການ, ຫ້ອງການ ໂຍທາທິການ ແລະ ຂົນສົ່ງ ເມືອງນາຊາຍທອງ ນະຄອນຫຼວງວຽງຈັນ ໂທລະສັບ: 021 632001.

6. ເອກະສານປະມູນ ສາມາດຊື້ໄດ້ທີ່ ຫ້ອງການ ໂຍທາທິການ ແລະ ຂົນສົ່ງ ເມືອງນາຊາຍທອງ ຕາມໂມງລັດຖະການ, ໃນລາຄາ 2.000.000 ກີບ/ຊຸດ ໂດຍບໍ່ມີການທົດແທນຄືນ.

7. ເອກະສານປະມູນຕ້ອງສົ່ງເຖິງ ຄະນະກຳມະການ ຈັດຊື້-ຈັດຈ້າງຂັ້ນເມືອງ ກ່ອນເວລາ 9:00 ໂມງ ຂອງວັນຕາມ ,ວັນທີ 05 ຕຸລາ 2026 ທີ່ຫ້ອງການໂຍທາທິການ ແລະ ຂົນສົ່ງ, ຊອງປະມູນຈະໄດ້ເປີດໃນເວລາ 9:30 ໂມງ ຂອງວັນດຽວກັນ ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ເຂົ້າຮ່ວມການປະມູນທີ່ສົນໃຈເຂົ້າຮ່ວມນຳ, ຊອງປະມູນໃດທີ່ສົ່ງຊ້າກ່ວາເວລາທີ່ກຳນົດໄວ້ ຈະບໍ່ຖືກຮັບຮອງ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ.

8. ເອກະສານປະມູນ ຕ້ອງປະກອບໜັງສືຄໍ້າປະກັນການປະມູນມາພ້ອມໃນມູນຄ່າ (ບໍ່ຫຼຸດ 2% ຂອງລາຄາປະມູນ) ໜັງສືຄໍ້າປະກັນການປະມູນ ຕ້ອງແມ່ນໜັງສືຄໍ້າປະກັນຂອງທະນາຄານທີ່ເຊື່ອຖືໄດ້ ແລະ ຕັ້ງຢູ່ ສປປ ລາວ ຫຼື ຈະແຈ້ງການຄໍ້າປະກັນການປະມູນດ້ວຍກົງດ ກໍໄດ້.

9. ຜູ້ສົນໃຈເຂົ້າຮ່ວມປະມູນສາມາດລົງກວດກາສະໜາມຕົວຈິງດ້ວຍຕົນເອງຕາມລາຍລະອຽດຂອງແຕ່ລະໂຄງການກອງປະຊຸມກ່ອນການປະມູນຈະໄດ້ຈັດຂຶ້ນ ໃນວັນທີ 30 ກັນຍາ 2026 ທີ່ຫ້ອງປະຊຸມຫ້ອງການ ໂຍທາທິການ ແລະ ຂົນສົ່ງ ເມືອງນາຊາຍທອງນະຄອນຫຼວງວຽງຈັນ ເລີ່ມເວລາ 9:00 ໂມງເປັນຕົ້ນໄປ.

**ຫົວໜ້າຫ້ອງການ**

ສັກສິນບັດ ໄຕສຸລິຍະ